ຢາວັກຊີນກັນພຍາດຮີໂມຟີລັສ ອິນພລວນສີປະເພດບີ

(Hib Vaccine) Haemophilus InfluenzaeType b

ສິ່ງທີ່ທ່ານຕ້ອງຮູ້

1 ພຍາດຮັຈໄອບີ (Hib) ແມ່ນຫຍງ?

ພຍາດຮີໂມຟີລັສອິນພລວນສີປະເພດບີ (ຮັຈະໄອບີ)Haemophilus influenzae (Hib). ແມ່ນພຍາດກັນດານເນື່ອງມາຈາກແມ່ພຍາດບັກເຕູັຽຊນິດນຶ່ງ. ມັນມັກເຂົ້າເດັກນ້ອຍອ່ອນຫຼຸດ 5 ປີລົງມາ.

ລູກຂອງທ່ານອາດຕິດແປດພຍາດຮັຈະໄອບີ (Hib)ຍ້ອນຢູ່ໄກ້ຊິດເດັກຫຼືຄົນຜູ້ທີ່ມີເຊື້ອພຍາດຊ້ອນຢູ່ໂດຽບໍ່ຮູ້ສຶກຕົວ. ແມ່ພຍາດຕໍ່ຕິດແຕ່ບຸກຄົນຫາບຸກຄົນ. ກ້ຳຫາກແມ່ພຍາດອາໃສຢູ່ໃນຜົ້ງດັງແລະຄໍເດັກກໍ່ຈະບໍ່ເຈັບປ່ວຽລົງດອກ. ແຕ່ບ່າງທີແມ່ພຍາດພັດລານໄປຫາປອດຫຼືສາຍເລືອດ, ແລ້ວແມ່ພຍາດຮດຈີໄອບີ (Hib) ກໍ່ກໍ່ເຫດຮ້າຍຂຶ້ນໄດ້.

ແຕ່ປາງເມື່ອຍັງບໍ່ທັນມີຢາວັກຊີນຕ້ານຮັຈະໄອບີ (Hib), ພຍາດຮັຈະໄອບີກໍ່ແມ່ນສ່າຍເຫດໃຫ່ຍຂອງເຍື່ອຫຸ້ມສມອງອັກເສບ (Meningitis) ຍ້ອນແມ່ບັກເຕັຣຽອັນມັກເກີດແກ່ເດັກອ່ອນຫຼຸດ 5 ປີລົງມາຢູ່ໃນສະຫະຣັກ. ພຍາດຊົ່ງແຕະຕ້ອງເຍື່ອຫຸ້ມໂຄ້ນແລະກ້ານສມອງຈະພາໃຫ້ເກີດຄວາມເສັຽຫາຍອັນຍືນນານແກ່ມັນສມອງແລະເສັຽຫູ. ພຍາດນີ້ກໍ່ຍັງຮັດໃຫ້ເກີດ:

- ປອດບວມ.
- ຜົ້ງຄໍຕີບໄຄ່ຮັດໃຫ້ຫັນໃຈຜິດ.
- ແມ່ພຍາດເຂົ້າເລືອດ, ເຂົ້າຂໍ່, ເຂົ້າກະດູກແລະເຍື່ອຫໍ່ໝາກຫົວໃຈ.
- ເສັຽຊີວິດ.



ກ່ອນເພີ່ນມີຢາວັກຊີນນີ້ໃຫ້ເຮົາໃຊ້, ເດັກນ້ອຍຫຼຸດ 5 ປີຢູ່ໃນສະຫະຣັກຸແຕ່ລະປີປະມານ 20,000 ຄົນເປັນພຍາດ ຂນາດໜັກ (Hib) ນີ້, ແລະເກືອບເກຶ່ງ 1,000 ກໍ່ເສັຽຊີວິດ.

ຢາວັກຊີນຕ້ານຮັຈະໄອບີ (Hib) ສາມາດປ້ອງກັນເຮົາບໍ່ໃຫ້ພຍາດເຂົ້າໄດ້.
ເດັກຕິດພຍາດຮຈະໄອບີ (Hib) ຈະເພີ່ມຈຳນວນຫຼາຍຂຶ້ນກ້ຳພວກເຮົາພາກັນຢຸດບໍ່ໃຫ້ໃຊ້ຢາກັນນີ້.

2 ຜູ້ໃດຈະເປັນຜູ້ຮັບຢາວັກຊີນຮຈະໄອບີ(Hib) ແລະເມື່ອໃດ?

ເດັກຕ້ອງໃດ້ຮັບຢາວັກຊີນຕ້ານພຍາດນີ້ (HIB) ເມື່ອເຂົາມີອາຍຸໄດ້:

- ✔ 2 ເດືອນ
- ✔ 4 ເດືອນ
- ✔ 6 ເດືອນ
- ✔ 12-15 ເດືອນ

*ຕາມແຕ່ຊນິດຢາວັກຊີນເຮັຈະໄອບີໄຊ້ ແກ່ເດັກ, ຂນານສ່າລັບອາຍຸ 6 ເດືອນອາດຈະບໍ່ຕ້ອງການ. ທ່ານໝໍຫຼືຜູ້ພຍາບານຈະແຈ້ງໃຫ້ທ່ານຊາບວ່າຈຳເປັນຫຼືບໍ່.

ກ້ຳທ່ານຫາກຂ້ານກາຍຂນານຢານຶ່ງຫຼືຕົກຫຼ້າຊ້າເວລາກໍ່ຈົງຮັບຂນານຕໍ່ມາໂດຽດ່ວນ. ບໍ່ຈຳເປັນຕັ້ງຕົ້ນໃໝ່.

ທ່ານຈະຮັບຢາຮຈະໄອບີວັກຊີນນີ້ພ້ອມກັບຢາວັກຊີນຊນິດອື່ນກໍ່ໄດ້.

ເດັກອາຍຸແກ່ກວ່າແລະຜູ້ໃຫຍ່
ຕາມທັມມະດາແລ້ວ, ເດັກອາຍຸເກີນ 5 ປີໄປບໍ່ຕ້ອງການຢາວັກຊີນ. ແຕ່ຍົກເວັ້ນໃນກໍ່ຣນີພິເສດຮ່າງກາຍບໍ່ສົມບູນເດັກເກີນ 5 ປີແລະຜູ້ໃຫຍ່ກໍ່ຕ້ອງໄດ້ຮັບຢານີ້, ສະພາບດັ່ງກ່າວມີຄື: ພຍາດເມັດເລືອດແດງລີບ(sick lecell disease), ຮຈໄອວີ(HIV)/ເອດສ(AIDS), ກຶກປາດເອົາມ້ານອອກ, ກ່ຳຍແທນໄຂກະດູກ, ປົວໂຣຄມະເຮັງ (cancer) ດ້ວຽຢາ. ຈົງກຸານລາຍລະອຽດນຳທ່ານໝໍຫຼືຜູ້ພຍາບານຂອງທ່ານ.

3 ຄົນຈຳພວກນຶ່ງຮັບຢາວັກຊີນນີ້ບໍ່ໄດ້ຫຼືຕ້ອງໂຈະໄວ້ຊົ່ວຄາວ

- ຜູ້ທີ່ເຄີຍແພ້ຢາວັກຊີນຮຈໄອບີ (Hib) ມາກ່ອນດ້ວຽອາການສາຫັດຕ້ອງຢຸດບໍ່ຮັບເອົາຂນານຕໍ່ໄປອີກ.
- ເດັກອາຍຸອ່ອນກວ່າ 6 ອາທິດກໍ່ບໍ່ໃຫ້ຮັບຢານີ້.
- ຜູ້ທີ່ບໍ່ສະບາຍໜັກຫຼືປານກາງກົງກັບຊ່ວງຍານສັກຢາວັກຊີນນີ້ກໍ່ຕ້ອງລໍ່ກ້ຳຈົນກວ່າຫາຍຂາດຈຶງສັກໄດ້.

ຈົງກຸານລາຍລະອຽດນຳທ່ານໝໍຫຼືຜູ້ພຍາບານຂອງທ່ານ.

4 ອັນຕຣາຍເນື່ອງຈາກຮັບຢາວັກຊີນເຮຈະໄອບີ (Hib) ມີຫຍັງແນ່?

ດັ່ງດຽວກັບຢາທົ່ວໄປ, ຢາວັກຊີນຕ້ານພຍາດກໍສາມາດກໍ່ບັນຫາ ຫຍຸ້ງຍາກຂຶ້ນກໍໄດ້. ຕົວຢ່າງອາການກະທົບແພ້ທີ່ກັນດານ. ກໍຣະນີແພ້ຢາ ຂນາດໜັກຫຼືຂຶ້ນເສັຽຊີວິດແມ່ນມີນ້ອຍທີ່ສຸດ.

ຄົນສ່ວນຫລາຍທີ່ຮັບຢາວັກຊີນ (Hib) ບໍ່ພົບກັບບັນຫາອັນໃດທັງສິ້ນ.

ບັນຫາເບົາບາງ
- ແດງ, ຮ້ອນ, ຫຼືໄຄ່ບ່ອນສັກຢາ (ເກີດຂຶ້ນໃນ 1 ຕໍ່ 4 ຄົນ).
- ຄືງຮ້ອນສູງກ່າວ 101°F (ເກີດຂຶ້ນໃນ1 ຕໍ່ 20 ຄົນ)

ເມື່ອບັນຫາດັ່ງກ່າວມີຂຶ້ນ, ມັນຈະເລີມ 1 ວັນຫຼັງຈາກ ສັກຢາວັກຊີນ, ມັນຈະຫາຍ ພາຍຫຼັງ 2 ຫາ 3 ວັນ.

5 ຈະເຮັດຫຍັງກ້ຳເກີດມີອາການກະທົບແພ້ຢາປານ ກາງຫຼືຂນາດໜັກ?

ເຮົາຈະສັງເກດເຫັນຫຍັງ?

ສະພາບພິດປົກຕິອັນໃດອັນນຶ່ງເຊັ່ນການກະທົບແພ້ຢາ ຂນາດໜັກ, ໄຂ້ຄືງຮ້ອນສູງຫຼືຄວາມຄິດແລະການປະພຶດປ່ຽນແປງ. ໃນອາ ການແພ້ຢາຂນາດໜັກກໍ່ງມີອາການຫັນໃຈພິດ, ຄໍແຫບຫຼືມີສຽງຫອດ ແຫດ, ເກີດມີນມ່ານຕານພີວໜັງ, ໜ້າຕາຈືດຈາງ, ເມືອຽອ່ອນຕານ ແຂນຂາ, ຫົວໃຈເຕັ້ນກຸ່ເຂົ້າ, ຫຼືວິນຫົວເກີດຂຶ້ນພາຍໃນສອງສາມນາທີຫຼັງຈາກສີດຢາວັກຊີນເຂົ້າ.

ເຮົາຈະເຮັດຫຍັງແນ່?

- ຮ້ອງຫາທານໝໍ, ຫຼື ໄປຫາໝໍທັນທີ.
- ເລົ່າໃຫ້ທ່ານໝໍຟັງສິ່ງທີ່ເປັນໄປ ວັນທີແລະເວລາເຫດເກີດຂຶ້ນ, ແລະເວ ລາທີ່ໄດ້ສັກຢາ.
- ຮ້ອງຂໍໃຫ້ທ່ານໝໍຫຼືຜູ້ພຍາບານ, ຫຼືພນັກງານສາທາຣະນະສຸຂກຽມຟອມ ສົ່ງເຂົ້າຣະບົບລາຍງານເຫດຮ້າຍເນື່ອງຈາກຢາວັກຊີນ (VAERS) ຫຼື ໂທຣ. ຫາ (VAERS) ໂດຽກົງທີ່ 1-800-822-7967.

6 ໂຄງການແຫ່ງຊາດເພື່ອທົດແທນຄ່າເສັຽຫາຍ ເນື່ອງຈາກຢາວັກຊີນ

ໃນກໍຣະນີນ້ອຽໜັກນ້ອຽໜາທີ່ທ່ານຫຼືລູກທ່ານລົ້ມປ່ວຽລົງເນື່ອງຈາກຢາ ວັກຊີນກໍມີໂຄງການສະຫະຣັກຸໄວ້ສໍາລັບຈ່າຍຄ່າປິ່ນປົວບົວຣະບັດໃຫ້.

ເພື່ອລາຍລະອຽດກ່ຽວກັບໂຄງການແຫ່ງຊາດເພື່ອທົດແທນຄ່າເສັຽຫາຍ ເນື່ອງຈາກຢາວັກຊີນ ຈົ່ງໂທຣ.ໄປທີ່ 1-800-338-2382 ຫຼື ສ່ອງຢ້ຽມ ຕານໍ່າງຄອມພິວເຕີ້ ທີ່ http://www.hrsa.gov/osp/vicp/

7 ເຮັດແນວໃດເຮົາຈະຮູ້ລະອຽດຂຶ້ນຕື່ມ?

- ກຸານທ່ານໝໍຫຼືຜູ້ພະຍາບານຂອງທ່ານ. ເພີ່ນຈະເອົາເອກສານໃຫ້ໃປ ອ່ານຫຼື ແນະນໍາສາຍຂ່າວອື່ນໃຫ້ຮູ້.
  1-888-767-4687
- ໂທຣ.ກຸານພະແນກສາທາຣະນະສຸຂ ຂອງຣັກຸຫຼືທ້ອງກຸິ່ນ ກ່ຽວກັບໂຄງ ການສັກຢາກັນພຍາດ
- ຕິດຕໍ່ສູນກາງຄວບຄຸມແລະກັນພຍາດ (CDC):
  - Call 1-800-232-4636 (1-800-CDC-INFO)
  - ຢ້ຽມຕານໍ່າງຄອມພິວເຕີ້ເພື່ອເບິ່ງໂຄງການປ້ອງກັນພຍາດ (National Immunization Program). ທີ່: http:/www.cdc.gov/nip

CDC
CENTERS FOR DISEASE CONTROL AND PREVENTION

U.S. DEPARTMENT OF HEALTH & HUMAN SERVICES
Centers for Disease Control and Prevention
National Immunization Program

DCH-0449L
AUTH: P.H.S., Act 42, Sect. 2126.

Vaccine Information Statement
Hib (12/16/98) - Laotian 42 U.S.C. § 300aa26

Translation provided by the Minnesota Department of Health
IC # 1410379

ເພື່ອໃຫ້ຜູ້ຮັກສາພະຍາບານມີຂໍ້ມູນທີ່ຖືກຕ້ອງກ່ຽວກັບ ສະຖານະພາບການສັກຢາປ້ອງກັນພະຍາດ, ການປະເມີນຜົນດ້ານການສັກຢາ ປ້ອງກັນພະຍາດ, ຕລະຕາຕະລາງການ ສັກຢາປ້ອງກັນພະຍາດ ທີ່ຕະນະນໍາໃຫ້ໃນອະນາຄົດ, ສະນັ້ນ ຂໍ້ມູນດັ່ງກ່າວຈະຖືກສົ່ງໄປທີ່ Michigan Care Improvement Registry (ສໍານັກງານທະບຽນດ້ານ ການປັບປຸງການດູຕລຂອງຮັຖມີຊິຕກນ) . ບຸກຄົນຕ່າງໆ ມີສິດທີ່ຈະຮ້ອງຂໍຜູ້ຮັກສາພະຍາບານຂອງຕົນ ບໍ່ໃຫ້ສົ່ງຂໍ້ມູນການສັກຢາປ້ອງກັນພະຍາດໄປທີ່ສໍານັກການທະບຽນກໍໄດ້.